**ແຜນການສອນ:**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 22 ພຶສຈິກາ 2009 (11-22-2009)**

---

**<u>ຈົ່ງຣະມັດຣະວັງໃນການເວົ້າຂອງທ່ານ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ຢາໂກໂບ 3:1-18)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ກ່ຽວກັບການທີ່ພວກເຮົາເວົ້າຢ່າງໃດທີ່ເປັນຜົນເສັຽຫາຍອັນສໍາຄັນໃນຊີວິດ.ຖ້າພວກເຮົາຫາກຝຶກແອບທີ່ຈະຄວບຄຸມການເວົ້າຂອງພວກເຮົາ, ເຮົາກໍຈະ ຈະເຣີນເຕີບໂຕເປັນຜູ້ໃຫຍ່ເຕັມທີ່ໃນຊີວິດຂອງພວກເຮົາ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສໍາຄັນ?</u>**: ການໃຊ້ຄໍາເວົ້າທີ່ໄຮ້ເຫດຜົນຂອງເຮົາເປັນຜົນກະທົບທີ່ບໍ່ດີຕໍ່ຄອບຄົວແລະຊີວິດຄຣິສຕຽນຂອງເຮົາ. ບົດຮຽນນີ້ຈະໄດ້ເຕືອນສະຕິພວກເຮົາວ່າ: ຄໍາເວົ້າທີ່ອອກມາຈາກປາກກໍແມ່ນອອກມາຈາກມັນສມອງ, ຊຶ່ງມີຄວາມໝາຍວ່າ ຄໍາເວົ້າທີ່ດີ ຖືກຕ້ອງແມ່ນອອກມາຈາກຄວາມຄິດທີ່ດີ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ທ່ານຈະຖືກຮຽກຮ້ອງໃຫ້ຍິນຍອມໃຫ້ພຣະເຈົ້າຊົງນໍາພາໃນການເວົ້າຂອງທ່ານ ໂດຍການໃຊ້ເວລາກັບພຣະທັມຄໍາສອນຂອງພຣະເຈົ້າຈົນໄປເຖິງຄວາມເຂົ້າໃຈໃນພຣະສະຕິປັນຍາຂອງພຣະເຈົ້າ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**
1. ອະທິຖານຂໍການຊົງນໍາຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈໍາຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສໍາຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນໍາ:</u>** ໃຫ້ສລຸບບົດຮຽນອາທິດແລ້ວນີ້ຢ່າງສັ້ນໆ. ແລ້ວນໍາພານັກຮຽນມາສຶກສາຄົ້ນຄວ້າບົດຮຽນສໍາລັບມື້ນີ້ຕາມຫົວຂໍ້ທີ່ໄດ້ລະບຸໄວ້ວ່າ "ຣະວັງໃນການເວົ້າຂອງທ່ານ"

- ໃຫ້ນັກຮຽນຄິດເຖິງຕອນທີ່ເຂົາເຈົ້າໄດ້ຮັບຄວາມເຈັບປວດຍ້ອນບາງສິ່ງ ບາງຢ່າງເນື່ອງຈາກຄໍາເວົ້າຂອງຄົນອື່ນ ຫລືເມື່ອເວລາເຂົາເຈົ້າເວົ້າມາໂດຍທີ່ເຂົາເຈົ້າບໍ່ເຂົ້າໃຈ.
- ໃນເວລາພວກເຮົາຍັງເປັນເດັກນ້ອຍ, ພວກເຮົາເຄີຍໄດ້ຍິນຄົນຮ້ອງເພງວ່າ "ໄມ້ຄ້ອນ ແລະກ້ອນຫີນອາ**ດຈະ** ເຮັດໃຫ້ກະດູກຂ້ອຍຫັກໄດ້, ແຕ່ຄໍາເວົ້າຈະບໍ່ເຮັດໃຫ້ຂ້ອຍເຈັບປວດຈັກເທື່ອ"
- ພວກເຮົາຮູ້ບໍ່ວ່າຕອນເຮົາເປັນເດັກນ້ອຍຄໍາເວົ້າເຫລົ່ານັ້ນບໍ່ເປັນຈິງ?
- ຮອຍຊໍ້າດໍາຂຽວ ແລະກະດູກທີ່ຫັກໄດ້ຖືກປິ່ນປົວໃຫ້ດີໄດ້, ແຕ່ບາງເທື່ອຮອຍບາດແຜຈາກຄໍາເວົ້າກໍຍັງ

ຢູ່ຕລອດຊີວິດ.

1. **<u>ພລັງອັນຍິ່ງໃຫຍ່ຂອງຄໍາເວົ້າ:</u>** (ຢາໂກໂບ 3:1-6)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 3:1-6
- ຈັດນັກຮຽນເປັນ ສີ່ກຸ່ມນ້ອຍ, ແລ້ວເອົາ ຄໍາທີ່ຂຽນວ່າ **"ຈົ່ງຣະມັດຣະວັງໃນການເວົ້າຂອງທ່ານ"** ໃຫ້ແຕ່ລະກຸ່ມເພື່ອຄົ້ນຄວ້າ ສົນທະນາ.
- ຄໍາເວົ້າແບບໃດທີ່ໄດ້ເສີມສ້າງໃຫ້ດີຂຶ້ນ ຫລືຄໍາເວົ້າແບບໃດທີ່ເປັນການທໍາລາຍ.)
- ໃຫ້ຂີດເປັນຫ້ອງສອງຫ້ອງໃສ່ກະດານ, ແລ້ວຂຽນຄໍາວ່າ "ເສີມສ້າງ" ໃສ່ຫ້ອງນຶ່ງ ແລະຂຽນຄໍາວ່າ: "ມ້າງລົງ" ໃສ່ຫ້ອງນຶ່ງ.
- ຫລັງຈາກນັກຮຽນໄດ້ສົນທະນາກັນແລ້ວເອົາຂໍ້ພຣະທັມໃນຢາໂກໂບ 3:1-2; ຢາໂກໂບ3:3; ຢາໂກໂບ 3:3-4; ແລະ ຢາໂກໂບ 3:5-6.ໃຫ້ແຕ່ລະກຸ່ມ, ແນະນໍາໃຫ້ເຂົາເຈົ້າສົນທະນາ ແລະກັນເຖິງເຣື່ອງຂໍ້ພຣະທັມທີ່ເຂົາເຈົ້າໄດ້. ຫລັງຈາກນັ້ນກໍໃຫ້ເຂົາເຈົ້າສລຸບແລະນໍາມາຣາຍງານ.
- ແນະນໍາໃຫ້ນັກຮຽນຊອກຫາພາບພົດທີ່ຢາໂກໂບໃຊ້ສໍາລັບລີ້ນໃນພຣະທັມຢາໂກໂບ 3:3-5 ແລະຂຽນໃສ່ກະດານຕາມທີ່ເຂົາເຈົ້າໄດ້ມາ.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ຢາໂກໂບ 3:1-6)

1. ເປັນດ້ວຍເຫດໃດຈຶ່ງໃຫ້ຕໍາແໜ່ງສູງແກ່ຄຣູສອນ ຜູ້ທີ່ມີຄວາມສາມາດຊີ້ແຈງໄດ້?
2. ອີງຕາມຢາໂກໂບ, ແມ່ນອັນໃດທີ່ເຮັດໃຫ້ຜູ້ນຶ່ງຜູ້ໃດຈະເຣີນຂຶ້ນ? ທຸກມື້ນີ້ກໍເປັນຢ່າງນັ້ນຢູ່ບໍ່?
3. ເຣື່ອງບັງຫຽນນ້ອຍໆໃນປາກມ້າຊຶ່ງສະແດງເຖິງການບັງຄັບນັ້ນພວກເຮົາຈະເວົ້າວ່າແນວໃດ?
4. ຄໍາເວົ້າທີ່ເວົ້າອອກມາເໝືອນກັບໄຟນັ້ນເປັນຢ່າງໃດ?
5. ພຣະທັມຕອນນີ້ປຽບທຽບໃສ່ນັກຮຽນຂອງພວກເຮົາອາທິດແລ້ວນີ້ ບ່ອນທີ່ຢາໂກໂບເວົ້າວ່າ ຊຶ່ງການທໍາຜິດຕໍ່ກົດບັນຍັດຂໍ້ດຽວກໍໄດ້ເຮັດຜິດຕໍ່ບັນຍັດໝົດທຸກຂໍ້ແລ້ວຢ່າງໃດ?
6. ທ່ານຈະອະທິບາຍເຖິງພລັງຂອງຄໍາເວົ້າທີ່ໄດ້ເວົ້າອອກມານັ້ນແນວໃດ?

2. **<u>ທັມມະຊາດສອງຢ່າງຂອງຄໍາເວົ້າ:</u>** (ຢາໂກໂບ 3:7-12)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 3:7-12
- ແນະນໍາໃຫ້ນັກຮຽນເບິ່ງພຣະທັມຢາໂກໂບ 3:7-12. ແລ້ວໃຫ້ເຂົາເຈົ້າຊອກຫາພາບພົດເຣື່ອງລີ້ນ ແລະຄໍາເວົ້າທີ່ເວົ້າອອກມາ.
- ນໍາພານັກຮຽນສົນທະນາເຣື່ອງຄໍາເວົ້າທີ່ເພີ້ມເຕີມທີ່ໃຊ້ໃນການກໍ່ສ້າງໃຫ້ຈະເຣີນ ແລະຄໍາເວົ້າທີ່ເຮັດໃຫ້ເສັຽຫາຍ. ນໍາເອົາຕົວຢ່າງຈາກປຶ້ມແປພຣະຄັມພີມາຂຽນເພີ້ມໃສ່ໃນກະດານ.
- ຄໍາເວົ້ານັ້ນໄດ້ມີພລັງຕໍ່ຜູ້ທີ່ເວົ້າຢ່າງໃດ? ແມ່ນຫຍັງທີ່ເຮັດຄົນມີຄວາມຈັບໃຈໃນຄໍາເວົ້າຂອງລາວ?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 3:7-12

1. ລີ້ນເໝືອນກັບສັດເດັຽຣະສານ ແລະບໍ່ເໝືອນສັດເດັຽຣະສານແນວໃດ?
2. ມີສອງຢ່າງທີ່ພຣະເຈົ້າຊົງອວຍພອນພວກເຮົາແລະໃຫ້ຄົນທີ່ພຣະເຈົ້າຊົງສ້າງນັ້ນແມ່ນອັນໃດແດ່?
3. ທ່ານຈະພັນລະນາເຖິງເຣື່ອງປະເພດຂອງໝາກໄມ້ແນວໃດ ບາງເທື່ອທ່ານກໍຮັບຜົນຕາມຄໍາເວົ້າຂອງທ່ານ

ຄືແນວໃດ? ມັນຄືກັນກັບຫຍັງ? ຣົດຊາດມັນເປັນແນວໃດ?

4. ໃນເມື່ອນ້ຳຈືດກັບນ້ຳເຄັມປະສົມກັນແລ້ວມີຫຍັງເກີດຂຶ້ນ? ຄຳເວົ້າທີ່ອອກມາຈາກປາກຂອງທ່ານເໝືອນກັນກັບນ້ຳສົດໆ ແລະເໝືອນກັບນ້ຳເຄັມນັ້ນຈະເປັນຢ່າງໃດ?

3 . **<u>ຈົ່ງໃຊ້ຄຳເວົ້າໃຫ້ຖືກຕ້ອງ:</u>** (ຢາໂກໂບ 3:13-18)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ຢາໂກໂບ 3:13-18
- ນຳພານັກຮຽນກຸ່ມນ້ອຍໆອະທິບາຍເຖິງສະຕິປັນຍາທາງຝ່າຍໂລກ ແລະສະຕິປັນຍາທີ່ມາຈາກພຣະເຈົ້າ.
- ອີງຕາມພື້ນຖານຂອງພຣະທັມຢາໂກໂບທີ່ອ້າງເຖິງຄົນທີ່ມີປັນຍາ, ໃນຄອບຄົວຂອງທ່ານ, ໃນໂບດຂອງທ່ານ ຫລືໃນຂົງເຂດທີ່ທ່ານຢູ່ມີໃຜແດ່ທີ່ມີສະຕິປັນຍາເໝາະສົມກັບພຣະທັມທີ່ກ່າວມານີ້? ເປັນເພາະເຫດໃດທ່ານຈຶ່ງເລືອກເອົາຄົນນີ້ຂຶ້ນມາເລົ່າເປັນຕົວຢ່າງ?
- ໜູນໃຈໃຫ້ນັກຮຽນເລົ່າເຫດຜົນພໍໄດ້ລາຍລະອຽດເລັກນ້ອຍກ່ຽວກັບຜູ້ທີ່ມີສະຕິປັນຍາຈາກພຣະເຈົ້າ. ສເນີໃຫ້ນັກຮຽນບອກເຖິງສະຕິປັນຍາຈາກພຣະເຈົ້າໄດ້ມີຜົນສະທ້ອນຕໍ່ຄຳເວົ້າທີ່ພວກເຮົາເວົ້າ ແລະພວກເຮົາຈະເວົ້າອອກມາແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຢາໂກໂບ 3:13-18

1. ສະຕິປັນຍາທາງຝ່າຍໂລກເປັນແນວໃດ?
2. ການອິດສາ ແລະຄວາມເຫັນແກ່ຕົວມັນໄດ້ສືບທອດມາຈາກໃສ?
3. ຄວາມອິດສາ ແລະຄວາມເຫັນແກ່ຕົວນຳພາແນວໃດ?
4. ຄວາມສຸພາບອ່ອນນ້ອມ ແລະຄວາມເວົ້າທີ່ດີເປັນຄຳເວົ້າມາຈາກຜູ້ມີສະຕິປັນຍາຈາກໃສ?
5. ຄຳເວົ້າທີ່ອອກມາຈາກຜູ້ທີ່ມີສະຕິປັນຍາຈາກພຣະເຈົ້າໄດ້ເຮັດໃຫ້ທ່ານດີຂຶ້ນແນວໃດແດ່?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ການຊຸບຊິບນິນທາ, ເປັນການເຮັດໃຫ້ຄົນອື່ນຕົກຕໍ່າ, ການຄຸຍໂມ້ໂອ້ອວດ, ການປັ້ນຫົວ, ການຈົ່ມ, ການປະຈົບປະແຈງ, ແລະການຕົວະເປັນການເວົ້າທີ່ບໍ່ດີ, ພວກເຮົາຕ້ອງຫລີກເວັ້ນຈາກຄຳເວົ້າເຫລົ່ານີ້.
- ຈົ່ງສຳນຶກຢູ່ສເມີວ່າການເວົ້າຊຸບຊິບນິນທາເລັກໆນ້ອຍໆສາມາດທຳລາຍຊື່ສຽງ ກຽດຕິຍົດ ແລະປະສິດທິພາບຂອງຄົນອື່ນໄດ້.
- ໃຫ້ຝຶກຝົນຕົນໃຫ້ເປັນຄົນທີ່ຍ້ອງຍໍສັຣເສີນ ແລະອວຍພອນແກ່ຄົນອື່ນ, ການຮູ້ຈັກຜ່ອນໜັກຜ່ອນເບົາ ແລະເລົ້າໂລມຜູ້ອື່ນດ້ວຍການໃຫ້ກຳລັງໃຈ.
- ໃຫ້ພວກເຮົາຊົ່ງຊາເບິ່ງການຈະເຣີນເຕີບໂຕ ແລະໃຫ້ຊົ່ງຊາວ່າພວກເຮົາຄວບຄຸມການເວົ້າຂອງພວກເຮົາ.
- ຍອມໃຫ້ພຣະວິນຍານບໍຣິສຸດເພີ້ມພລັງອຳນາດໃຫ້ພວກເຮົາເປັນຄົນທີ່ມີສະຕິປັນຍາໃນການເວົ້າຂອງພວກເຮົາ ແລະໃນສິ່ງທີ່ພວກເຮົາເວົ້າ.
- ຂໍໃຫ້ພວກເຮົາແນ່ໃຈວ່າຄຳເວົ້າຂອງພວກເຮົາກໍ່ໃຫ້ເກີດສັນຕິສຸກ ແລະບໍ່ແມ່ນການກໍ່ຄວາມຫວຸ້ນວາຍ.